# ບົດລາຍງານ

## ການສ້າງຄວາມອາດສາມາດດ້ວຍວິທີການໃຫ້ຄຳປຶກສາMentorແມ່ນການ ແກ້ໄຂບັນຫາແບບຍືນຍົງ ໃຫ້ ສປປ ລາວ

ກໍລະກົດ 31st, 2018. ບົດລາຍງານກອງປະຊຸມ ຢູ່ນະຄອນຫລວງວຽງຈັນ ກ່ຽວກັບ ວຽກງານ Mentor

# Report

## ພາບລວມ

### ວຽກງານMentor ຢູ່ ສປປ ລາວ

ໃນປີ 2016 ວຽກງານນີ້ ໄດ້ກາຍເປັນສ່ວນນຶ່ງຂອງ ໂຄງການຮັກສາສຸຂະພາບຂັ້ນຕົ້ນ(ຮສຂ) ສະນັບສະໜູນໂດຍ ອົງການຊ່ວຍເຫລືອເດັກສາກົນ, ຮູບແບບການສ້າງຂີດຄວາມສາມາດMentor ໄດ້ຖືກນຳໃຊ້ເຂົ້າໃນການສ້າງທັກສະ ແລະ ຄວາມໝັ້ນໃຈ ໃຫ້ແກ່ ບັນດາຜູ້ສະໜອງການບໍລິການຮັກສາສຸຂະພາບແມ່ ແລະ ເດັກເກີດໃໝ່. ໂດຍໄດ້ຮັບທຶນສະນັບສະໜູນ ຈາກ ການຊ່ວຍເຫລືອຂອງສະຫະລັດ(USAID) ໂດຍມີຊື່ວ່າ ໂຄງການ ການມີຊີວິດລອດຂອງແມ່ ແລະ ເດັກເກີດໃຫມ່ (MCSP) ແນ່ໃສ່ສະນັບສະໜູນລັດຖະບານລາວ ໃນການບັນລຸເປົ້າ ໝາຍຂອງຕົນ ທີ່ລະບຸຢູ່ ໃນຍຸດທະສາດ ສຸຂະພາບໄວຈະເລີນພັນ,ແມ່,ເດັກເກີດໃໝ່ ແລະ ເດັກນ້ອຍ(RMNCH) ປີ 2016-2025 ແລະ ຫລຸດຜ່ອນການເສຍຊີວິດຂອງແມ່ ແລະ ເດັກເກີດໃໝ່ ດ້ວຍການປັບປຸງຄຸນນະພາບການຮັກສາສຸຂະພາບໃນໄລຍະເກີດລູກ.

ວຽກງານMentor ແມ່ນສອດຄ່ອງກັບ ໂຄງການແຫ່ງຊາດ ກ່ຽວກັບການຮັກສາສຸຂະພາບເດັກເກີດໃໝ່(EENC) ແລະ ກ້າວໄປເຖິງການ ຮັກສາແຮງງານ, ລະຫວ່າງເກີດ ແລະ ຫັລງເກີດ ທັນທີທັນໄດ ຂອງແມ່ ແລະ ເດັກເກີດໃໝ່ ຖືເປັນວິທີການປະສົມປະສານ. ພາຍຫັລງການຈັດຕັ້ງປະຕິບັດໂຄງການໄດ້ສອງປີ ຢູ່ ແຂວງຫລວງພະບາງ ແລະ ແຂວງ ໄຊຍະບຸລີ ໄດ້ມີຜົນງານພົ້ນເດັ່ນ,ມີຄວາມເປັນໄປໄດ້ ແລະ ມີທ່າອ່ຽງທີ່ຈະມີຄວາມຍືນຍົງພາຍໃນລະບົບຂອງລັດຖະບານ.

ຄວາມແຕກຕ່າງລະຫວ່າງວຽກງານ Mentor, ການຝຶກອົບຮົມທົ່ວໄປ ແລະ ໂຄງການສ້າງຂີດຄວາມສາມາດແຫ່ງຊາດ. ດັ່ງນັ້ນສິ່ງສຳຄັນແມ່ນ ບັນດາMentor ແລະ ການນຳຂັ້ນເມືອງ ແລະ ຂັ້ນແຂວງ ໄດ້ມີໂອກາດແລກປ່ຽນການຮຽນຮູ້ ຈາກແຂວງ ຫລວງພະບາງ ແລະ ແຂວງໄຊຍະບຸລີ ກ່ຽວກັບຜົນສຳເລັດ,ບົດຮຽນຖອດຖອນໄດ້ ແລະ ສິ່ງທ້າທາຍ ໂດຍແນ່ໃສ່ໃນການຮວມເອົາບົດຮຽນເຫົ່ານັ້ນໃຫ້ເປັນຮູບແບບທີ່ ມີປະສິດຜົນຫລາຍຂຶ້ນໃນ ສປປ ລາວ.

ດັ່ງນັ້ນໂຄງການຈຶ່ງແນ່ໃສ່ການສ້າງ ເວທີ ແລະ ໂອກາດ ໃຫ້ແກ່ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ແລກປ່ຽນ ບົດຮຽນ ເພື່ອນຳສະເໜີລາຍງານຫາ ຜູ້ມີສ່ວນກ່ຽວຂ້ອງຢູ່ຂັ້ນກະຊວງສາທາລະນະສຸກ,ໃນນັ້ນປະກອບມີ ບັນດາໂຄງການສ້າງຂີດຄວາມສາມາດ ເຊັ່ນ : ໂຄງການ EENC, EmOC, IMCI ແລະ ພາກສ່ວນທີ່ມີສ່ວນກ່ຽວຂ້ອງອື່ນໆ ໃນວຽກງານ ການບໍລິການ ການສຶກສາ, ພະນັກງານ ອົງການ NGO,ການນຳຈາກ ໂຮງໝໍຂັ້ນສູນກາງ ແລະ ບັນດາຕົວແທນຜູ້ບໍລິການດ້ານສຸຂະພາບເຊັ່ນ ພະດຸງຄັນ,ພະ ແນກເດັກນ້ອຍ ແລະ OB/GYN.

## ເນື້ອໃນຂອງກອງປະຊຸມ

ຈຸດປະສົງກອງປະຊຸມ ແມ່ນເພື່ອແລກປ່ຽນບົດຮຽນ ຈາກການຈັດຕັ້ງປະຕິບັດໂຄງການເນັ້ນເຕີ ສາມປີ ຢູ່ແຂວງຫລວງພະບາງ ແລະ ແຂວງໄຊຍະບຸລີ ແລະ ເພື່ອປຶກສາຫາລື ແຜນການຕໍ່ໜ້າ ເພື່ອແນ່ໃສ່ ໃຫ້ວຽກງານມີປະສິດທິພາບ,ຄວາມເປັນໄປໄດ້ ແລະ ຮູບແບບການສ້າງຂີດຄວາມສາມາດ ໃນ ສປປ ລາວ. ເພື່ອຮັບປະກັນສິ່ງເຫົ່ານີ້ ເກີດຂຶ້ນ, ກະຊວງສາທາລະນະສຸກໄດ້ນຳພາ ການຈັດກອງປະຊຸມ, ໜັງສືແຈ້ງການ ຈາກກະຊວງສາທາລະນະສຸກ ໂດຍມີການປະສານງານກັບທີມງານ EENC. ນອກ ຈາກນັ້ນຍັງມີ ການອ່າງອາລະກອງປະຊຸມ ເພື່ອຮັບປະກັນໃຫ້ບັນລຸຕາມແຜນທີ່ວາງ ໄວ້ ເຊິ່ງໄດ້ຮັບຄຳແນະນຳ ຈາກ ທ່ານ ດຣ ໂຊໂກະ ຈາກ ອົງການ WHO ຮັບຜິດ ຊອບວຽກສຸຂະພາບ ໄວຈະເລີນພັນ,ແມ່,ເດັກເກີດໃໝ່,ເດັກນ້ອຍ,ໄວໜຸ່ມ ແລະ ໂພ ຊະນາການ. ເຊິ່ງມີຄວາມສຳຄັນຫລາຍເນື່ອງວ່າ WHO ສະນັບສະໜູນ ວຽກງານ ການສ້າງຂີດຄວາມສາມາດຫລາຍດ້ານ ຢູ່ ສປປ ລາວ ທີ່ໄດ້ເຂົ້າໃຈສະພາບປະຈຸບັນ ຢ່າງກວ້າງຂວາງ. ນອກຈາກນັ້ນຍັງໄດ້ຮັບການປະກອບສ່ວນຈາກ ດຣ. ອາລິງກອນ (ຮອງອຳນວຍການ ສະຖາບັນການຢາ,ວິທະຍາໄລແພດສາດ ((UHS) ເຊິ່ງໄດ້ຊີ້ໃຫ້ ເຫັນເຖິງຄວາມຄືບໜ້າໃນປະເທດ ກ່ຽວກັບ ການຮັກສາສຸຂະພາບແມ່ ທີ່ລະບຸຢູ່ ຍຸດ ທະສາດ RMNCH

ມີຜູ້ເຂົ້າຮ່ວມກອງປະຊຸມຫລາຍກວ່າ 70 ທ່ານ ໃນນັ້ນມາຈາກຕົວແທນ ແຂວງ ຫລວງພະບາງ ແລະ ໄຊຍະບຸລີ 13 ທານ : ເນັ້ນເຕີ,ຜູ້ອຳນວຍການໂຮງໝໍ,ຫົວໜ້າ ພະແນກສາທາລະນະສຸກ ຈາກຂັ້ນເມືອງ ແລະ ຂັ້ນແຂວງ ທັງສອງແຂວງ

ຕາມດ້ວຍບົດກ່າວເປີດພິທີກອງປະຊຸມ ແລະ ສາຍຮູບເງົາກ່ຽວກັບວຽກງານMentor ຄວາມຍາວ 12 ນາທີ (ສາມາດຕິດຕາມໄດ້ໃນເວບລິ້ງຂ້າງລຸ່ມ), ເນັ້ນເຕີ ສອງທ່ານ ໄດ້ນຳສະເໜີລາຍງານ, 1 ທານ ຈາກຂັ້ນແຂວງ ແລະ 1 ທ່ານ ຈາກຂັ້ນເມືອງ. ທ່ານ ດຣ.ໂຊໂກະ ໄດ້ນຳສະເໜີລາຍງານເປົ້າໝາຍຍຸດທະສາດຂອງໂຄງການ RMNCH ລະບຸກ່ຽວກັບເປົ້າໝາຍສຳຄັນ ຂອງແຕ່ລະຈຸດປະສົງຍຸດທະສາດ ເຊັ່ນ : ສະໜອງ ການບໍລິການອັນສຳຄັນ ໃຫ້ມີຄຸນນະພາບ ແລະ ຮັບປະກັນຍົກລະດັບການນຳໃຊ້ການ ບໍລິການ. ຄຳຖາມສຳຄັນທີ່ທ່ານໄດ້ສະເໜີແມ່ນຈະເຮັດ ວິທີໃດ ໃຫ້ວຽກງານ ມີການ ຄົງຕົວ ແລະ ສືບຕໍ່ປັບປຸງ ທັກສະຂອງຜູ້ສະໜອງການບໍລິການໃຫ້ມີຄວາມຍືນຍົງ ໂດຍບໍ່ມີສິ່ງຈູງໃຈ ໃນການຕິດຕາມ? ຫລືວ່າວຽກງານMentor ຈະເຮັດໃຫ້ບັນລຸເປົ້າ ໝາຍນີ້ ໂດຍຮຸບການຕິດຕາມຢູ່ກັບສະຖານທີ່ເຮັດວຽກ ແລະ ຕິດຕາມດ້ວຍຕົວເອງ ຈະເປັນໄປໄດ້ບໍ່?

ວາລະຕໍ່ມາແມ່ນ ຄະນະຮັບຜິດຊອບ ປຶກສາຫາລື ໂດຍການເອື້ອອຳນວຍຄວາມສະ ດວກໃນການປຶກສາຫາລື ໂດຍທ່ານ ດຣ. ໂຊໂກະ ຈາກອົງການ WHO, ເນັ້ນເຕີ ເກົ້າທ່ານ, ຫົວໜ້າພະແນກສາທາລະນະສຸກຈາກສອງແຂວງ ຄື ແຂວງຫລວງພະບາງ ແລະ ແຂວງໄຊຍະບຸລີ ໄດ້ແລກປ່ຽນປະສົບການຂອງເພີ່ນໃນການຈັດຕັ້ງປະຕິບັດ ວຽກງານMentor ແລະ ພ້ອມທັງໄດ້ຕອບຄຳຖາມ ຂອງນັກສຳມະນາກອນ. ວາລະນີ້ ແມ່ນມີຄວາມໝາຍສຳຄັນຫລາຍເພາະວ່ານັກສຳມະນາກອນຈາກແຂວງຫລວງພະບາງ ແລະ ໄຊຍະບຸລີໄດ້ປຶກສາຫາລື ຄວາມມຸ້ງຫັວງ ແລະ ຄວາມເອົາຈິງເອົາຈັ່ງ ຕໍ່ກັບວຽກ ງານMentorຢູ່ໃນພະແນກສາທາລະນະສຸກແຂວງໄຊຍະບຸລີ ເຊິ່ງວ່າ ທ່ານຫົວໜ້າພະ ແນກໄດ້ກ່າວເຖິງວິທີ ຈະຮັກສາ ແລະ ວາງແຜນ ສືບຕໍ່ ແລະ ຂະຫຍາຍຮູບແບບ ຂອງວຽກງານMentorຢູ່ແຂວງໄຊຍະບຸລີ, ເຖິງແມ່ນວ່າອົງການຊ່ວຍເຫລືອເດັກສາ ກົນໄດ້ຢຸດເຊົາການສະນັບສະໜູນດ້ານທຶນຮອນໃນເດືອນກຸມພາທີ່ຜ່ານມາ ກໍ່ ຕາມ.ບັນດາMentor ມາຈາກພາກສ່ວນ(ພະດຸງຄັນ, MD, ພະແນກເດັກນ້ອຍ ແລະ OB/GYN)ໄດ້ລະບຸກ່ຽວກັບຄວາມເອົາຈິງເອົາຈັ່ງຂອງເພີ່ນ ຕົວຢ່າງ : ພະ ຍາດເດັກນ້ອຍ ແລະ ບາງເຂດ ທີ່ບໍ່ແມ່ນ ເມືອງເປົ້າໝາຍຂອງໂຄງການ ຮສຂ, ເພີ່ນກໍ່ນຳເອົາບົດຮຽນຂອງໂຄງການໄປໝູນໃຊ້. ສິ່ງເຫົ່ານີ້ໄດ້ສ້າງຄວາມສົນໃຈໃຫ້ ແກ່ນັກສຳມະນາກອນ ແລະ ໄດ້ຖາມຄຳຖາມຫລາຍຢ່າງ. ການປຶກສາຫາລືນີ້ ໄດ້ສືບ ຕໍ່ອີກຫລາຍຊົ່ວໂມງ.

## ບົດຮຽນສຳຄັນຕົ້ນຕໍ

ໃນພາກບ່າຍ,ນັກສຳມະນາກອນຖືກແບ່ງອອກເປັນກຸ່ມສົນທະນາ ໂດຍອີງຕາມຂົງເຂດວຽກງານ, ຕົວຢ່າງ ໂຄງການ EENC, EmOC, IMCI ແລະ ການສຶກສາ. ສ່ວນນັກສຳມະນາກອນ ແຂວງຫລວງພະບາງ ແລະ ແຂວງໄຊຍະບຸລີ ຖືກແບ່ງ ເປັນກຸ່ມນຶ່ງ ເພື່ອປຶກສາຫາລື ກ່ຽວກັບວິທີການເຊື່ອມโยง ວຽກງານMentor ເຂົ້າກັບໂຄງການອື່ນ ແລະ ສືບຕໍ່ໄດ້ໃນອະນາຄົດ.ຫລາຍປະເດັນທີ່ໄດ້ຮັບຮູ້ວ່າ ເປັນຈຸດແຂງ ນັ້ນກໍ່ຄື ສາຍສຳພັນລະຫວ່າງ ເມັນເຕີ ແລະ ເມັນທີ ນຳສະເໜີໂດຍການສະແດງລະຄອນສົມມຸດ ແລະ ເນື້ອໃນໄດ້ຊີ້ໃຫ້ເຫັນວິທີການຂອງMentor ລົງໄປຕິດຕາມເຂດທ້ອງຖິ່ນ. ປະເດັນຕໍ່ມາແມ່ນ ໄດ້ກຳນົດກຸ່ມທັງໝົດທີ່ເປັນໄປໄດ້ ດ້ານງົບປະມານ ແລະ ເວລາ ຂອງວຽກງານMentor ທີ່ສາມາດເຊື່ອມโยงເຂົ້າວຽກງານການບໍລິການປົກກະຕິ.

ໄດ້ມີການເຫັນດີຫລາຍດ້ານ ກ່ຽວກັບ ການສະນັບສະໜູນ ຂອງການນຳ ແລະ ການເຂົ້າຮ່ວມ ເພື່ອໃຫ້ໄດ້ມາເຊິ່ງຜົນສຳເລັດ ໃນການສ້າງຂີດຄວາມສາມາດ. ສິ່ງເຫລົ່ານີ້ແມ່ນສາຍເຫດທີ່ເຮັດໃຫ້ມີຜົນສຳເລັດຂອງວຽກງານMentor.

ນັກສຳມະນາກອນໃນກອງປະຊຸມ ມີຄວາມສົນໃຈ ພາຍຫັລງທີ່ໄດ້ຮຽນຮູ້ວຽກງານMentor ແລະ ໄດ້ເລີ່ມທີ່ຈະຄົ້ນຄິດວ່າຈະໝູນໃຊ້ບົດຮຽນເຂົ້າໃນວຽກງານຂອງຕົນເອງ.

## ຜົນສຳເລັດຕົ້ນຕໍ:

## ສ້າງຄວາມສົນໃຈບັນດາໂຄງການ

## ລະດັບຊາດ

ປະກອບມີຜົນສຳເລັດສາມຢ່າງຂອງກອງປະຊຸມ. ນຶ່ງແມ່ນ ການດຶງຄວາມສົນໃຈ ແລະ ຄວາມເຂົ້າໃຈຕໍ່ວຽກງານMentor ຂອງ ກະຊວງສາທາລະນະສຸກ ແລະ ພາກສ່ວນທີ່ມີສ່ວນກ່ຽວຂ້ອງຂັ້ນສູນກາງ. ສິ່ງເຫົ່າລ່ານີ້ໄດ້ເປີດຫົນທາງໃຫ້ແກ່ ພວກເຮົາໃຫ້ມີຈຸດສຸມເພີ້ມອີກໃນອະນາຄົດ ກ່ຽວກັບການສ້າງຂີດຄວາມສາມາດ ຂັ້ນສູນກາງ.

ຄຳເຫັນສຳຄັນຈາກນັກສຳມະນາກອນ

ເຊິ່ງມີເນື້ອໃນດັ່ງນີ້ :

ທ່ານ ອຸເທວັນ ຄູນນະວົງສາ ຈາກ WHO ກ່າວວ່າ ໂຄງການMentor ເປັນໂຄງການຕົວແບບທີ່ດີ ເຊິ່ງຂ້າພະເຈົ້າໄດ້ຄວາມຮູ້ຫລາຍ ແລະ ຄິດວ່າ ພວກເຮົາສາມາດນຳໃຊ້ເຂົ້າໃນໂຄງການ *EENC.*

ມີຄຳເຫັນທີ່ດີ ກ່ຽວກັບຮູບເງົາMentor ແລະ ວິທີການເຊື່ອມโยง ວຽກງານMentorເຂົ້າກັບໂຄງການ *EENC.*

ທ່ານ ດຣ. ຟຣີຢາ ໂອລູລິນ (Dr Freya O'loughlin CICH) ກ່າວວ່າ ຂ້າພະເຈົ້າມັກ ຮູບເງົາMentorຫລາຍ ເພາະມັນໄດ້ໃຫ້ລາຍລະອຽດວ່າ ໂຄງການກຳລັງເຮັດຫັຍງ ແລະ ອົງການ *WHO ຈະພະຍາຍາມປ່ຽນວິທີການຝຶກອົບຮົມ ໂດຍນຳເອົາວິທີການMentor ໄປໝູນໃຊ້*

ນອກຈາກນັ້ນ ວຽກງານດັ່ງກ່າວນີ້ຍັງໄດ້ປະກອບສ່ວນເຂົ້າໃນວຽກປະຈຸບັນ ໃນປະເທດ ກ່ຽວກັບການພັດທະນາ ໂຄງການ IMCI.

ທ່ານ ດຣ. ນາຕາລີ ອິວານ CICH ກ່າວວ່າ ມັນເປັນການ ເປີດໂອກາດການປຶກສາຫາລືທີ່ມີຜົນປະໂຫຍດ ແລະ ຂ້າພະເຈົ້າເຂົ້າໃຈຫລາຍກ່ຽວກັບ ເມັນເຕີ ແມ່ນຫັຍງ*! ຂ້າພະເຈົ້າຄິດວ່າ ສອດຄ່ອງທີ່ຈະໝູນໃຊ້ເຂົ້າໃນວຽກຂອງພວກເຮົາ ກັບ ໂຄງການ IMCI.*

## ຄວາມເປັນເຈົ້າການ ແລະ ການເຜີຍແຜ່

ຜົນສຳເລັດອັນທີ່ສອງ ແມ່ນການນຳສະເໜີ ແລະ ເຜີຍແຜ່ ໂດຍ ຄູ່ຮ່ວມງານ ແຂວງຫລວງພະບາງ ແລະ ໄຊຍະບຸລີ. ເພີ່ນໄດ້ກ່າວປາໄສ ແລະ ປຶກສາຫາລື ໄດ້ສ້າງຄວາມສົນໃຈຂອງຜູ້ເຂົ້າຮ່ວມ ແລະ ມີຄວາມໝາຍສຳຄັນ ແລະ ລະບຸຄວາມເປັນຈິງຂອງໂຄງການ.

ຕົວຢ່າງ ແລະ ປະສົບການຂອງເພີ່ນ ໄດ້ຊຸກຍູ້ ໃຫ້ແກ່ການຜູ້ຈັດຕັ້ງປະຕິບັດວຽກງານ ໄດ້ຮັບການນຳສະເໜີຈາກຫົວໃຈ ແລະ ຄວາມມຸ່ງຫັວງ ຖືວ່າ ເປັນສິ່ງປະຈັກຈາ ສາມາດສຳຜັດໄດ້. ເພີ່ນໄດ້ມີຄວາມກະຕືລືລົ້ນ ແລະ ຄວາມຈິງໃຈ ປຶກສາຫາລື ສິ່ງທ້າທາຍ ແລະ ຜົນສຳເລັດ ເຊິ່ງໄດ້ສ້າງຄວາມສົນໃຈໃຫ້ແກ່ຜູ້ເຂົ້າຮ່ວມຢ່າງກວ້າງຂວາງ.

ຕົວຢ່າງດັ່ງກ່າວນີ້ ເປັນເປັນບົດຮຽນໃຫ້ແກ່ອົງການອື່ນໆ ໃນການຮຽນຮູ້ວິທີການຮັບປະກັນ ຄູ່ຮ່ວມງານລັດຖະບານ ເປັນຜູ້ນຳພາ ແລກປ່ຽນບົດຮຽນຂອງເພີ່ນ. ຜູ້ເຂົ້າຮ່ວມຈາກແຂວງຫລວງພະບາງ ແລະ ໄຊຍະບຸລີ ມີຄວາມສາມາດ ແລະ ເຊື່ອໝັ້ນຕົນເອງ ໃນການໂຄສະນາເຜີຍແຜ່ຢູ່ຂັ້ນສູນກາງ ແລະ ໄດ້ຮັບຄຳເຫັນ ແລະ ເປັນການທົດສອບທີ່ເປັນໄປໄດ້ ໃນກໍລະນີບັນດາອົງການ ເອື້ອອຳນວຍຄວາມສະດວກໃຫ້ໂອກາດຫລາຍຂຶ້ນ ໃຫ້ແກ່ຄູ່ຮ່ວມງານ ໃນການເຜີຍແຜ່ວຽກງານ.

ນອກຈາກນັ້ນ, ການນຳສະເໜີ ທີ່ໃຫ້ຂໍ້ມູນລະອຽດ, ຜູ້ເຂົ້າຮ່ວມ ຈາກແຂວງຫລວງພະບາງ ແລະ ໄຊຍະບຸລີໄດ້ຮັບຜົນປະໂຫຍດຈາກການທີ່ໄດ້ມີໂອກາດແລກປ່ຽນບົດຮຽນ ຢູ່ຂັ້ນສູນກາງ ທີ່ມີຄຳເວົ້າຈາກຜູ້ເຂົ້າຮ່ວມບາງຕອນວ່າ .

ວຽກງານMentor ມີຄວາມສຳຄັນ,ແຕ່ໃນປະຈຸບັນພວກເຮົາໄດ້ຈັດຕັ້ງປະຕິບັດໂຄງການຢູ່ແຂວງຫລວງພະບາງ ແລະ ໄຊຍະບຸລີເທົ່ານັ້ນ. ມື້ນີ້ພວກເຮົາໄດ້ມີໂອກາດເຜີຍແຜ່ໃຫ້ອົງການອື່ນຮັບຮູ້. ເປັນໂຄງການໃໝ່ສຳລັບທຸກໆຄົນໃນພະນັກງານລັດ ແລະ ເປັນໂອກາດອັນດີທີ່ໄດ້ແລກປ່ຽນບົດຮຽນກັບ ກະຊວງສາທາລະນະສຸກແລະ ການນຳຂັ້ນສູງ. ຂ້າພະເຈົ້າມີຄວາມພາກພູມໃຈຫລາຍ. ດຣ. ເກ່ຍລີ ເປັນ Mentor ແລະ ອຳນວຍການໂຮງໝໍເມືອງງອຍ.

ຂ້າພະເຈົ້າ ຮູ້ສຶກຕື່ນເຕັ້ນ ທີ່ໄດ້ແລກປ່ຽນບົດຮຽນກັບສູນກາງ. ຂ້າພະເຈົ້າບໍ່ມີປະສົບການແບບນີ້ມາກ່ອນ ແລະ ຮູ້ສຶກພາກພູມໃຈ ແລະ ຕື່ນເຕັ້ນ. ທ່ານເລີດພະນາ, ພະດຸງຄັນ ຈາກໂຮງໝໍແຂວງຫລວງພະບາງ

ບັນດາຜູ້ເຂົ້າຮ່ວມທັງໝົດຈາກ ແຂວງຫລວງພະບາງ ແລະ ແຂວງໄຊຍະບຸລີ ໄດ້ສະແດງຄວາມພາກພູມໃຈ ທີ່ສາມາດນຳສະເໜີລາຍງານປະສົບການກ່ຽວກັບ ວຽກງານMentor ຢູ່ຂັ້ນສູນກາງ. ພວກເພີ່ນຮູ້ສຶກດີໃຈ ທີ່ໄດ້ມີຜູ້ເຂົ້າຮ່ວມກອງປະຊຸມ

ເຫັນຄຸນຄ່າ ແລະ ປະສິດທິພາບ ວຽກງານMentor ແລະ ພວກເພີ່ນຍັງໄດ້ຮັບຮູ້ວ່າ ວຽກງານMentorຈະຖືກເຊື່ອມໂຍງເຂົ້າກັບບັນດາໂຄງການອື່ນ.

## ການປະສານງານພາຍໃນທີມງານ

ຜົນສຳເລັດອັນທີ່ສາມ ແມ່ນການເອື້ອອຳນວຍຄວາມສະດວກການປຶກສາຫາລື ແລະ ການປະສານງານລະຫວ່າງທີມງານທີ່ແຕກຕ່າງກັນ ແລະ ຈຸດປະສົງຍຸດທະສາດ ທີ່ນອນຢູ່ໃນຍຸດທະສາດ RMNCH. ຕົວຢ່າງ : ພະນັກງານເຂົ້າຮ່ວມໂຄງການ EmOC ນອນຢູ່ຈຸດປະສົງຍຸດທະສາດທີ່ 2 ແລະ 3 ປະສານງານກັບຈຸດປະສົງຍຸດ ທະສາດທີ່4 ຂອງໂຄງການ EENC ແລະ ຈຸດປະສົງຍຸດທະສາດທີ່ 5 ຂອງໂຄງການ IMCI ແລະ ການດູແລຮັກສາເດັກ. ຫາຍາກທີ່ຈະມີໂອກາດ ປຶກສາຫາລືຄົບຄະນະ ໃນຫ້ອງປະຊຸມດຽວກັນ ແລະ ປຶກສາຫາລືວິທີການສ້າງຂີດຄວາມສາມາດທີ່ມີປະສິດ ພາບ.  ເຖິງແມ່ນວ່າກອງປະຊຸມປະຈຳປີຂອງໂຄງການ RMNCH. ຫລາຍທີມງານ ຈຸດປະສົງຍຸດທະສາດ(SO) ນຳສະເໜີລາຍງານບໍ່ແມ່ນມື້ດຽວກັນ ພ້ອມກັບການປະ ສົມປະສານໜ້ອຍລະຫວ່າງທີມງານ. ດັ່ງນັ້ນຈຶ່ງມີໂອກາດປະສົມປະສານເພີ່ມເຕີມລະ ຫວ່າງ ຈຸດປະສົງຍຸດທະສາດ(SO) ທີ່ 2,3 ແລະ 4 ສຳລັບວຽກງານການດູແລຮັກ ສາ ແມ່ ແລະ ເດັກເກີດໃໝ່. **ວຽກງານMentorໄດ້ໃຫ້ໂອກາດປະສົມປະສານ ວຽກງານການດູແລຮັກສາ ແມ່ ແລະ ເດັກເກີດໃໝ່ ໃຫ້ລວມສູນ ໃນ ການປັບປຸງຄຸນນະພາບການດູແລຮັກສາ ສຸຂະພາບແມ່ ແລະ ເດັກເກີດ ໃໝ່ ໃນໄລຍະເວລາຄອດ.**

## ທິດທາງແຜນການ ແລະ ບາດກ້າວຕໍ່ໄປ

ກອງປະຊຸມໄດ້ດຶງດູດຄວາມສົນໃຈ ແລະ ການມີສ່ວນຮ່ວມ ຂັ້ນສູນກາງ ໂດຍສະ ເພາະ ແມ່ນກະຊວງສາທາລະນະສຸກ ແລະ ເຫັນໄດ້ຢ່າງຈະແจ້ງທີ່ຈະຜັນຂະຫຍາຍ ວຽກງານMentor ແລະ ຖືເປັນວຽກງານທີ່ມີປະສິດທິພາບ. ປະຈຸບັນຈະໄດ້ຮັກສາສິ່ງ ທີ່ມີຢູ່ ແລະ ຕິດຕາມ ໂດຍເນັ້ນໃສ່ການມີສ່ວນຮ່ວມຫລາຍຂຶ້ນ ລະຫວ່າງໂຄງການ ຂັ້ນສູນກາງ((EENC, IMCI, EmOC). ຂັ້ນຕອນທຳອິດ ໄດ້ສະເໜີ ຮັບປະກັນ ບັນດາການນຳ ພະແນກສາທາລະນະສຸກ,ຜູ້ວາງນະໂຍບາຍ ແລະ ຜູ້ບໍລິຫານອາວຸໂສ ເຂົ້າໃຈຄວາມສຳຄັນຂອງວຽກງານ Mentor. ທ່ານ ຣສ. ດຣ. ຄຳເປ ພິງສະຫວັດ ປະທານສະມາຄົມ ແພດເດັກ ແຫ່ງປະເທດລາວ, ອຳນວຍການໂຮງໝໍເສດຖາທິລາດໄດ້ລະບຸວ່າ ຜົນສຳເລັດອັນນຶ່ງຂອງວຽກງານ Mentor ແມ່ນຍ້ອນເປັນພາກສ່ວນນຶ່ງຂອງໂຄງການຮັກສາສຸຂະພາບຂັ້ນຕົ້ນ. ທ່ານຮູ້ ສຶກວ່າ ໂຄງການ ຣສຂ ເປັນຈຸດເລີ່ມຕົ້ນ ໃນການບັນລຸບັນດາເປົ້າໝາຍ ທີ່ນອນຢູ່ໃນ ຍຸດທະສາດ RMNCH

## ເອກະສານອ້າງອີງ


**Bang. A. et al** (2016) Helping Babies Breathe (HBB) training: What happens to knowledge and skills over time? *BMC Pregnancy and Childbirth*, pp.1–12. [Online] Available at: http://dx.doi.org/10.1186/s12884-016-1141-3. (Accessed Nov 2017) **ຄູ່ມື ຝອຣ ຊ່ວຍເດັກນ້ອຍຫາຍໃຈ**

**Bluestone, J. et al** (2013). Effective in-service training design and delivery: evidence from an integrative literature review. *Human Resources for Health 11:51 p1-26* ***ຝອຣ ການສະໜອງການບໍລິການທີ່ມີ ປະສິດທິພາບ***

**Gomez, P, et al** (2018) Accelerating newborn survival in Ghana through low-dose, high-frequency health worker training approach: a cluster randomized trial. *BMC Pregnancy and Childbirth* 18:72 72 **ຄູ່ມື ການຊ່ວຍຊີວິດລອດເດັກເກີດໃໝ່**

**Tang, J.H. et al** (2016). Improvement and retention of emergency obstetric and neonatal care knowledge and skills in a hospital mentorship program in Lilongwe, Malawi. *International Journal of Gynaecology and Obstetrics* 132(2), pp.240–243.

## ລິ້ງ ແລະ ແຫລ່ງຂໍ້ມູນ

ສາມາດດາວໂຫຼດຟຣີ ວິດີໂອໄດ້ທີ່

https://vimeo.com/257073720

ລິ້ງຂໍ້ມູນກອງປະຊຸມ

https://laos.savethechildren.net/news/mentorship-capacity-building-sustainable-solutions

Vientiane Times article

## ບົດຂອບໃຈ

ຂໍແດງຄວາມຂອບໃຈມາຍັງບັນດາMentor ແຂວງຫລວງພະບາງ ແລະ ແຂວງໄຊຍະບູລີ,ອຳນວຍການໂຮງໝໍຂັ້ນເມືອງ ແລະ ຂັ້ນແຂວງ ແລະ ຫົວໜ້າພະແນກສາທາລະນະສຸກ ທີ່ໄດ້ໂຄສະນາເຜີຍແຜ່ວຽກງານMentor. ຂໍສະແດງຄວາມຂອບໃຈມາຍັງ ດຣ. ອາລິງກອນ, ດຣ.ໂຊໂກະ, ດຣ.ສົມມັນນາ, ດຣ.ດວງພອນ ສຳລັບການສະເໜີລາຍງານ,ການເອື້ອອຳນວຍຄວາມສະດວກ ແລະ ການຕ້ານຫາກະກຽມຂອງທ່ານ. ຂໍສະແດງຄວາມຂອບໃຈມາຍັງທີມງານ ອຊດສ SCI ນະຄອນຫລວງວຽງຈັນ ແລະ ຫລວງພະບາງ ສຳລັບການສະນັບສະໜຸນການເດີນທາງ ແລະ ການມີສ່ວນຮ່ວມ. ສຸດທ້າຍ ຂໍສະແດງຄວາມຂອບໃຈມາຍັງຜູ້ເຂົ້າຮ່ວມທຸກທ່ານ ທີ່ໄດ້ເຂົ້າຮ່ວມກອງປະຊຸມຢ່າງຫ້າວຫັນ ໃນການປຶກສາຫາລືໃນຫົວຂໍ້ ການສ້າງຂີດຄວາມສາມາດທີ່ມີປະສິດທິພາບ ສຳລັບ ສປປ ລາວ.

ກະລຸນາຕິດຕໍ່ helen.catton@savethechildren.org ເພື່ອສອບຖາມຂໍ້ມູນເພີ້ມເຕີມ ກ່ຽວກັບກອງປະຊຸມ ແລະ ກ່ຽວກັບວຽກງານMentor